ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 17 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍມາດຕະການທາງບໍລິຫານຕໍ່ການລະເມີດຂໍ້ຫ້າມໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດບັນດາມາດຕະການທາງບໍລິການຕໍ່ຜູ້ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເພື່ອເຮັດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຍົກສູງສະຕິເຄົາລົບກົດໝາຍໃຫ້ສູງຂຶ້ນ ແນໃສ່ເຮັດໃຫ້ການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານຫຼັກຊັບ ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 2 ມາດຕະການທາງບໍລິຫານຕໍ່ການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ)

ມາດຕະການທາງບໍລິຫານຕໍ່ການລະເມີດ ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແມ່ນ ການບັງຄັບໃຊ້ກົດໝາຍຕໍ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ ກ່ຽວ ຂ້ອງ ທີ່ມີພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍສະບັບດັ່ງກ່າວ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ມາດຕະການທາງບໍລິຫານຕໍ່ການລະເມີດໃນຂົງເຂດວຽກງານຫຼັກຊັບ

**ມາດຕາ 4 ມາດຕະການທາງບໍລິຫານໃນຂົງເຂດວຽກງານຫຼັກຊັບ**

ມາດຕະການທາງບໍລິຫານຢູ່ໃນຂົງເຂດວຽກງານຫຼັກຊັບ ປະກອບມີມາດຕະການ ສຶກສາອົບຮົມ, ປັບໃໝ ແລະ ມາດຕະການເພີ່ມເຕີມ.

**ມາດຕາ 5 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ລະເມີດກົດໝາຍ ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ຊຶ່ງມີມູນຄ່າຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ຜູ້ລະເມີດ ຮັບຮູ້ ແລະ ເຂົ້າໃຈຕໍ່ການລະເມີດຂອງຕົນ ພ້ອມທັງສະໝັກໃຈແຈ້ງ ຫຼື ລາຍງານການລະເມີດດັ່ງກ່າວ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ຜູ້ລະເມີດໄດ້ໃຫ້ການຮ່ວມມືຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ຽວກັບການລະເມີດຂອງຕົນ;
4. ຜູ້ລະເມີດມີເຈດຕະນາໃນການແກ້ໄຂ ແລະ ສະກັດກັ້ນ ຕໍ່ກັບການລະເມີດຂອງຕົນ ເພື່ອບໍ່ໃຫ້ຜົນເສຍຫາຍເກີດຂຶ້ນ;
5. ການລະເມີດ ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມທົ່ວໄປ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນ ທຸລະກິດຫຼັກຊັບ, ບໍລິຫານກອງທຶນເພື່ອການລົງທຶນ, ຕະຫຼາດຫຼັກຊັບ, ສູນຮັບຝາກຫຼັກຊັບ ຫຼື ດຳເນີນທຸລະກິດລະດົມທຶນ ທີ່ນຳໃຊ້ເຄື່ອງມືທາງດ້ານການເງິນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;
2. ດຳເນີນ ທຸລະກິດປະເມີນມູນຄ່າຊັບສິນ, ດູແລຊັບສິນ, ກວດສອບ ຫຼື ຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້ ຫຼື ພັນທະບັດລັດຖະບານ ໃນວຽກງານຫຼັກຊັບ ໂດຍບໍ່ໄດ້ຮັບການຮັບຮອງ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ສວຍໃຊ້ທຸລະກິດຫຼັກຊັບ ຫຼື ຊື້ ຂາຍຫຼັກຊັບ ເພື່ອຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນກໍລະນີ ຕໍ່າກວ່າ 1.000.000.000 ກີບ ລົງມາ ຈະຖືກປັບໃໝ ແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ໃນກໍລະນີ ສູງກວ່າ 1.000.000.000 ກີບ ຂຶ້ນໄປ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ພ້ອມທັງຈະຖືກດຳເນີນຄະດີອາຍາ;

4. ນຳໃຊ້ ຫຼື ໃຫ້ໃຊ້ ບັນຊີ ແລະ ຊື່ ຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອຊື້ ຂາຍຫຼັກຊັບ ຍົກເວັ້ນກໍລະນີ ການນຳໃຊ້ບັນຊີຕາງໜ້າເພື່ອຊື້ ຂາຍຫຼັກຊັບ ຈະຖືກປັບໃໝ 3 ເທົ່າ ຂອງກຳໄລ ຫຼື ລາຍຮັບ ທີ່ໄດ້ຮັບຈາກການກະທຳດັ່ງກ່າວ. ໃນກໍລະນີ ບໍ່ມີກຳໄລ ຫຼື ລາຍຮັບ ຫຼື ມີກຳໄລ ຫຼື ລາຍຮັບ ຕໍ່າກວ່າ 50.000.000 ກີບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືໃນ ການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງວຽກງານຫຼັກຊັບ, ບໍ່ສະໜອງ ຂໍ້ມູນ, ເອກະສານ ຫຼື ຫຼັກຖານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 20.000.000 ກີບ ຫາ 50.000.000 ກີບ;

6. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢ່າງໜ້ອຍ 10 ປີ ຈະຖືກປັບໃໝ 15.000.000 ກີບ ຫາ 30.000.000 ກີບ.

**ມາດຕາ 7 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສຳລັບການອອກຈຳໜ່າຍຫຼັກຊັບ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ນິຕິບຸກຄົນພາຍໃນ ອອກຈຳໜ່າຍຫຼັກຊັບຢູ່ ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ນິຕິບຸກຄົນຕ່າງປະເທດ ເຂົ້າມາອອກຈຳໜ່າຍຫຼັກຊັບຢູ່ພາຍໃນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ອອກຈຳໜ່າຍຫຼັກຊັບບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ມີການຕົວະຂໍ້ມູນໃນທຸກຮູບແບບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 150.000.000 ກີບ ໃນກໍລະນີທີ່ຍັງບໍ່ໄດ້ອອກຈຳໜ່າຍຫຼັກຊັບ ແລະ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ເມື່ອເວລາອອກຈຳໜ່າຍຫຼັກຊັບແລ້ວ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ນຳໃຊ້ເງິນຈອງຊື້ຫຼັກຊັບ ຫຼື ທຶນທີ່ລະດົມໄດ້ ກ່ອນໄດ້ຮັບການຢັ້ງຢືນຜົນສຳເລັດການອອກຈຳໜ່າຍຫຼັກຊັບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ ແລະ ຜູ້ມີສ່ວນກ່ຽວຂ້ອງລວມທັງ ຜູ້ມີອຳນາດຄວບຄຸມບໍລິສັດ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ;

5. ນຳໃຊ້ທຶນທີ່ລະດົມໄດ້ ບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ປ່ຽນແປງຈຸດປະສົງການນຳໃຊ້ທຶນ ທີ່ບໍ່ສອດຄ່ອງກັບໜັງສືຊວນຊື້ ເວັ້ນເສຍແຕ່ມີມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມຜູ້ຖືໜ່ວຍລົງທຶນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ລວມທັງ ຜູ້ມີອຳນາດຄວບຄຸມບໍລິສັດ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ.

**ມາດຕາ 8 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບບໍລິສັດຫຼັກຊັບ ແລະ ຜູ້ບໍລິຫານ**

ບໍລິສັດຫຼັກຊັບ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດໍາເນີນທຸລະກິດຫຼັກຊັບເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ໃຫ້ບໍລິການຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ຫຼື ເປັນຕົວແທນໃນການອອກຈໍາໜ່າຍຫຼັກຊັບທີ່ບໍ່ສອດຄ່ອງກັບກົດໝາຍ ຈະຖືກປັບໃໝ ດັ່ງນີ້:

- ໃນກໍລະນີ ມີລາຍຮັບແຕ່ 50.000.000 ກີບ ຂຶ້ນໄປ ຈະຖືກປັບໃໝ 3 ເທົ່າ ຂອງລາຍຮັບທີ່ໄດ້ຮັບຈາກການບໍລິການດັ່ງກ່າວ;
- ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ 50.000.000 ກີບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ;
- ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ.

3. ໃຫ້ບໍລິການຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ຫຼື ເປັນທີ່ປຶກສາທາງດ້ານການເງິນ ໃຫ້ແກ່ບໍລິສັດທີ່ຖືຮຸ້ນໃນບໍລິສັດຕົນ ຫຼື ບໍລິສັດທີ່ຕົນຖືຮຸ້ນ ຫຼາຍກວ່າ ສິບສ່ວນຮ້ອຍ (10%) ຂອງຮຸ້ນທັງໝົດ ຈະຖືກປັບໃໝ 3 ເທົ່າ ຂອງລາຍຮັບທີ່ໄດ້ຮັບຈາກການໃຫ້ບໍລິການດັ່ງກ່າວ. ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍ ຮັບຕໍ່າກວ່າ 50.000.000 ກີບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ໂຄສະນາຈໍາໜ່າຍຫຼັກຊັບ ໂດຍບໍ່ສອດຄ່ອງກັບເນື້ອໃນຕາມທີ່ໄດ້ບົ່ງໄວ້ໃນໜັງສືຊວນຊື້ ຫຼື ບໍ່ຖືກ ຕ້ອງຕາມຄວາມເປັນຈິງ ຊຶ່ງເຮັດໃຫ້ຜູ້ລົງທຶນເຂົ້າໃຈຜິດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ຄວບ ຫຼື ຍຸບເລີກ ບໍລິສັດ, ສາຂາ, ໜ່ວຍບໍລິການ ຫຼື ຫ້ອງການຜູ້ຕາງໜ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ຊື້ ຂາຍຫຼັກຊັບ, ນໍາໃຊ້ເງິນ ຫຼື ຫຼັກຊັບ ຂອງລູກຄ້າໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ ຈະຖືກປັບໃໝ ດັ່ງນີ້:

- ໃນກໍລະນີ ມີກໍາໄລແຕ່ 10.000.000 ກີບ ຂຶ້ນໄປ ຈະຖືກປັບໃໝ 3 ເທົ່າ ຂອງກໍາໄລ;
- ໃນກໍລະນີ ບໍ່ມີກໍາໄລ ຫຼື ມີກໍາໄລຕໍ່າກວ່າ 10.000.000 ກີບ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ;
- ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ.

7. ນໍາໃຊ້ເງິນ, ຫຼັກຊັບ ຫຼື ຊັບສິນອື່ນ ຂອງລູກຄ້າ ເພື່ອສະສາງ-ຊໍາລະໜີ້ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

8. ເຜີຍແຜ່, ນໍາໃຊ້ ຂໍ້ມູນຂອງລູກຄ້າ ເພື່ອຜົນປະໂຫຍດຂອງຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເວັ້ນເສຍແຕ່ການສະໜອງຂໍ້ມູນໃຫ້ແກ່ອົງການທີ່ມີສິດອໍານາດກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 30.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 25.000.000 ກີບ;

9. ຖືເອົາບູລິມະສິດໃນການຊື້ ຂາຍຫຼັກຊັບຂອງຕົນ ສູງກວ່າຂອງລູກຄ້າ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 9 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສຳລັບບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ບໍລິຫານ**

ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດບໍລິຫານກອງທຶນເພື່ອການລົງທຶນ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ສ້າງຕັ້ງກອງທຶນ ແລະ ຂາຍໜ່ວຍລົງທຶນ ຂອງກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 80.000.000 ກີບ;

3. ເອົາຊັບສິນຂອງກອງທຶນໜຶ່ງ ໄປລົງທຶນໃນກອງທຶນອື່ນ ທີ່ຕົນບໍລິຫານ, ການຊື້ຮຸ້ນ ຫຼື ຮຸ້ນກູ້ ຂອງທະນາຄານດູແລຊັບສິນທີ່ຕົນໃຊ້ບໍລິການ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ນຳເອົາຊັບສິນຂອງກອງທຶນ ໄປຊື້ຫຼັກຊັບຂອງບໍລິສັດໃດໜຶ່ງທີ່ມີອຳນາດຄວບຄຸມ ໃນບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ນຳໃຊ້ທຶນທີ່ລະດົມໄດ້ກ່ອນໄດ້ຮັບອະນຸຍາດ ຫຼື ລົງທຶນເຂົ້າໃນເປົ້າໝາຍໃດໜຶ່ງທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 150.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ລວມຊັບສິນຂອງ ກອງທຶນໜຶ່ງ ເຂົ້າກັບ ກອງທຶນອື່ນ ຫຼື ຊັບສິນຂອງຕົນ ຫຼື ຊັບສິນຂອງລູກຄ້າລາຍອື່ນ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 150.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

7. ນຳໃຊ້ຊັບສິນຂອງກອງທຶນ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ບໍ່ແມ່ນຜູ້ຖືໜ່ວຍລົງທຶນຂອງກອງທຶນນັ້ນ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 150.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

8. ສ້າງລາຍຮັບໃຫ້ຜູ້ຖືໜ່ວຍລົງທຶນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

9. ດຳລົງຕຳແໜ່ງໃດໜຶ່ງໃນ ທະນາຄານດູແລຊັບສິນ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນອື່ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ;

10. ມີສ່ວນຮ່ວມໃນ ທຸລະກຳຫຼັກຊັບ ຫຼື ທຸລະກຳອື່ນ ທີ່ສ້າງຜົນເສຍຫາຍໃຫ້ແກ່ຊັບສິນຂອງ ກອງທຶນເພື່ອການລົງທຶນ ແລະ ຜົນປະໂຫຍດຂອງຜູ້ຖືໜ່ວຍລົງທຶນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 10 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ບໍລິຫານ**

ບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການປະເມີນມູນຄ່າຊັບສິນເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ເປີດເຜີຍຂໍ້ມູນຂອງກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ປະເມີນມູນຄ່າຊັບສິນໂດຍບໍ່ສອດຄ່ອງກັບຫຼັກການຂອງການປະເມີນມູນຄ່າຊັບສິນ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ປະເມີນມູນຄ່າຊັບສິນທີ່ ບໍລິສັດ, ຜູ້ບໍລິຫານຂອງບໍລິສັດ ຫຼື ຜູ້ປະເມີນມູນຄ່າຊັບສິນ ມີສ່ວນກ່ຽວຂ້ອງທາງດ້ານຜົນປະໂຫຍດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 11 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບທະນາຄານດູແລຊັບສິນ ແລະ ຜູ້ບໍລິຫານ**

ທະນາຄານດູແລຊັບສິນ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການດູແລຊັບສິນເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ຖືຮຸ້ນໃນບໍລິສັດບໍລິຫານກອງທຶນເພື່ອການລົງທຶນທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ;

3. ລົງທຶນ ຫຼື ຊື້ ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ;

4. ໃຫ້ບໍລິການດູແລຊັບສິນແກ່ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ເປັນຜູ້ຖືຮຸ້ນໃນທະນາຄານຕົນ ຫຼື ທີ່ທະນາຄານຕົນໄປຖືຮຸ້ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ;

5. ລວມຊັບສິນຂອງກອງທຶນໜຶ່ງເຂົ້າກັບກອງທຶນອື່ນ ຫຼື ຊັບສິນຂອງຕົນ ຫຼື ຊັບສິນຂອງລູກຄ້າລາຍອື່ນ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 150.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ໂອນ, ນໍາໃຊ້ ຫຼື ບໍລິຫານຊັບສິນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.00 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.00 ກີບ ຫາ 50.000.000 ກີບ;

7. ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັບລູກຄ້າ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

8. ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 12 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບບໍລິສັດກວດສອບ ແລະ ຜູ້ບໍລິຫານ**

ບໍລິສັດກວດສອບ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການກວດສອບເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ໃຫ້ການບໍລິການທາງດ້ານການບັນຊີຕໍ່ ກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ທີ່ຕົນໃຫ້ການບໍລິການກວດສອບ ໃນປີການບັນຊີດຽວກັນ ຈະຖືກປັບໃໝ 3 ເທົ່າ ຂອງມູນຄ່າທີ່ໄດ້ຮັບຈາກການບໍລິການດັ່ງກ່າວ. ກໍລະນີບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ 50.000.000 ກີບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 13 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ແລະ ຜູ້ບໍລິຫານ**

ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ເປີດເຜີຍຂໍ້ມູນຂອງກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ຈັດລໍາດັບຄວາມໜ້າເຊື່ອຖື ໂດຍບໍ່ສອດຄ່ອງກັບຫຼັກການຂອງການຈັດລໍາດັບຄວາມໜ້າເຊື່ອຖືຂອງສາກົນ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ບໍລິການຈັດລໍາດັບຄວາມໜ້າເຊື່ອຖືທີ່ ບໍລິສັດຕົນ, ຜູ້ບໍລິຫານຂອງບໍລິສັດ ຫຼື ຜູ້ຈັດລໍາດັບຄວາມໜ້າເຊື່ອຖື ມີສ່ວນກ່ຽວຂ້ອງທາງດ້ານຜົນປະໂຫຍດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 14 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບນັກວິຊາຊີບທຸລະກິດຫຼັກຊັບ**

ນັກວິຊາຊີບທຸລະກິດຫຼັກຊັບ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບຸກຄົນອື່ນນໍາໃຊ້ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບຂອງຕົນ ຫຼື ລະຫັດນາຍໜ້າຊື້ ຂາຍຫຼັກຊັບຂອງຕົນ ຈະຖືກປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ;

2. ຮັບຄໍາສັ່ງຊື້ ຂາຍຫຼັກຊັບຈາກລູກຄ້າຢູ່ນອກສະຖານທີ່ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະຂອງບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າຮັບຄໍາສັ່ງຊື້ ຂາຍ. ກໍລະນີ ມູນຄ່າຮັບຄໍາສັ່ງຊື້ ຂາຍຫາກຕໍ່າກວ່າ 10.000.000 ກີບ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 30.000.000 ກີບ;

3. ປະຕິບັດໜ້າທີ່ເປັນນັກວິຊາຊີບທຸລະກິດຫຼັກຊັບໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນອື່ນ ໃນຂະນະທີ່ເປັນພະນັກງານຂອງ ບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ໜຶ່ງ ຈະຖືກປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ;

4. ເຜີຍແຜ່, ນໍາໃຊ້ຂໍ້ມູນຂອງລູກຄ້າ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ໃຫ້ຄໍາປຶກສາກ່ຽວກັບການລົງທຶນແກ່ຜູ້ລົງທຶນ ໃນຂະນະທີ່ເປັນ ທີ່ປຶກສາທາງດ້ານການເງິນ ຈະຖືກປັບໃໝ ແຕ່ 30.000.000 ຫາ 50.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 15 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບຕະຫຼາດຫຼັກຊັບ, ຜູ້ບໍລິຫານ, ຄະນະພະແນກ ແລະ ພະນັກງານວິຊາການ**

ຕະຫຼາດຫຼັກຊັບ, ຜູ້ບໍລິຫານ, ຄະນະພະແນກ ແລະ ພະນັກງານວິຊາການ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານຕາມແຕ່ລະກໍລະນີ ດັ່ງນີ້:

1. ດໍາເນີນທຸລະກິດຕະຫຼາດຫຼັກຊັບ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ລົງທຶນໃນກິດຈະການ ຫຼື ວິສາຫະກິດອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 3 ເທົ່າ ຂອງລາຍຮັບ ທີ່ໄດ້ຈາກການລົງທຶນ. ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ 10.000.000 ກີບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ແຈ້ງ ຫຼື ເຜີຍແຜ່ຂໍ້ມູນ ທີ່ບໍ່ເປັນຈິງ ແລະ ເຮັດໃຫ້ບຸກຄົນອື່ນເຂົ້າໃຈຜິດ ຊຶ່ງສົ່ງຜົນກະທົບຕໍ່ ຫຼັກຊັບ, ຜູ້ລົງທຶນ ແລະ ຕະຫຼາດຫຼັກຊັບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ເປີດເຜີຍ, ການນໍາໃຊ້ ຫຼື ສົ່ງຕໍ່ ຂໍ້ມູນຂອງ ສະມາຊິກຂອງຕົນ, ບໍລິສັດຈົດທະບຽນ ຫຼື ຂໍ້ມູນສ່ວນຕົວຂອງຜູ້ລົງທຶນ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ເປີດການຊື້ ຂາຍຫຼັກຊັບ ທີ່ຢູ່ໃນໄລຍະຫ້າມ ຊື້ ຂາຍ ຫຼື ໂອນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ເປັນສະມາຊິກຂອງ ສະພາບໍລິຫານ ແລະ ຄະນະອໍານວຍການຂອງ ບໍລິສັດຈົດທະບຽນ ແລະ ສະຖາບັນສື່ກາງດ້ານຫຼັກຊັບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 16 ມາດຕະການປັບໃໝຕໍ່ການລະເມີດ ສໍາລັບສູນຮັບຝາກຫຼັກຊັບ, ຜູ້ບໍລິຫານ, ຄະນະພະແນກ ແລະ ພະນັກງານວິຊາການ**

ສູນຮັບຝາກຫຼັກຊັບ, ຜູ້ບໍລິຫານ, ຄະນະພະແນກ ແລະ ພະນັກງານວິຊາການ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດໍາເນີນທຸລະກິດສູນຮັບຝາກຫຼັກຊັບເກີນຂອບເຂດທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ລົງທຶນໃນກິດຈະການ ຫຼື ວິສາຫະກິດອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 3 ເທົ່າ ຂອງລາຍຮັບ ທີ່ໄດ້ຈາກການລົງທຶນ. ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ 10.000.000 ກີບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ແຈ້ງ ຫຼື ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນກະທົບຕໍ່ ຫຼັກຊັບ, ຜູ້ລົງທຶນ ແລະ ຕະຫຼາດຫຼັກຊັບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ເປີດເຜີຍ ຫຼື ການນໍາໃຊ້ຂໍ້ມູນ ຫຼື ສິ່ງຕໍ່ ຂໍ້ມູນຂອງ ສະມາຊິກຂອງຕົນ, ບໍລິສັດຈົດທະບຽນ ຫຼື ຂໍ້ມູນສ່ວນຕົວຂອງຜູ້ລົງທຶນ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

5. ນໍາໃຊ້ບັນຊີຫຼັກຊັບຂອງສະມາຊິກ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 150.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ສະໜອງຂໍ້ມູນ ກ່ຽວກັບການຖືຄອງຫຼັກຊັບ ຫຼື ການຊໍາລະຫຼັກຊັບ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

7. ເປັນສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການຂອງ ຕະຫຼາດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ສະຖາບັນສື່ກາງດ້ານຫຼັກຊັບ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 17 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບສະມາຄົມວຽກງານຫຼັກຊັບ**

ສະມາຄົມວຽກງານຫຼັກຊັບ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ເຄື່ອນໄຫວເກີນຂອບເຂດຂອງສະມາຄົມທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ສ້າງຕັ້ງ ແລະ ເຄື່ອນໄຫວ ບໍ່ສອດຄ່ອງກັບຫຼັກການ ແລະ ວັດຖຸປະສົງຂອງສະມາຄົມ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ສະໜັບສະໜູນ ຫຼື ເຄື່ອນໄຫວ ທີ່ຈະສ້າງຄວາມເສຍຫາຍທາງດ້ານ ຊື່ສຽງ ຫຼື ຊັບສິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 18 ມາດຕະການປັບໃໝຕໍ່ການລະເມີດຂໍ້ຫ້າມສໍາລັບຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ຜູ້ບໍລິຫານ**

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແລະ ຜູ້ບໍລິຫານ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ຈະຖືກປັບໃໝທາງບໍລິຫານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ເປີດເຜີຍ, ນໍາໃຊ້ ຫຼື ສົ່ງຕໍ່ ຂໍ້ມູນຂອງ ຜູ້ຖືຮຸ້ນກູ້ ຫຼື ພັນທະບັດລັດຖະບານ ເພື່ອຜົນປະໂຫຍດຂອງ ຕົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກປັບໃໝ ແຕ່ 70.000.000 ກີບ ຫາ 100.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

2. ສະໜອງຂໍ້ມູນ ກ່ຽວກັບການເຮັດໜ້າທີ່ເປັນ ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ທີ່ຜູ້ໃຫ້ບໍລິການມີສ່ວນກ່ຽວຂ້ອງທາງດ້ານຜົນປະໂຫຍດ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 70.000.000 ກີບ. ຜູ້ບໍລິຫານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 19 ມາດຕະການເພີ່ມເຕີມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ ນອກຈາກຈະຖືກມາດຕະການ ສຶກສາອົບຮົມ ແລະ ປັບໃໝແລ້ວ ຍັງຈະຖືກມາດຕະການເພີ່ມເຕີມ ດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;

2. ໂຈະ ການດໍາເນີນທຸລະກິດ, ການໃຫ້ບໍລິການ ຫຼື ການເຄື່ອນໄຫວ ບາງສ່ວນ ຫຼື ທັງໝົດ, ການອອກຈໍາໜ່າຍຫຼັກຊັບ ແລະ ໂຈະການເຄື່ອນໄຫວອື່ນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;

3. ຖອນ ໃບອະນຸຍາດດໍາເນີນທຸລະກິດ, ໃບຮັບຮອງ ຫຼື ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ, ຍົກເລີກການອອກຈໍາໜ່າຍຫຼັກຊັບ ແລະ ຖອນ ຫຼື ຍົກເລີກ ການເຄື່ອນໄຫວອື່ນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ;

4. ຈ່າຍດອກເບ້ຍ ຫຼື ສົ່ງເງິນຄືນ ໃຫ້ແກ່ ຜູ້ລົງທຶນ ຫຼື ລູກຄ້າຂອງຕົນ;

5. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

ມາດຕາ 20 ມາດຕະການທາງບໍລິຫານອື່ນໆ

ສຳລັບ ການປະຕິບັດມາດຕະການທາງບໍລິຫານ ກ່ຽວກັບວຽກງານຫຼັກຊັບອື່ນ ນອກຈາກທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແມ່ນຈະໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

ມາດຕາ 21 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 22 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ

ສອນໄຊ ສິດພະໄຊ